# ພຣະທັມມີກາ

| 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|

## ມີກາ

## MICAH

1

Chapter 1

1 ພຣະທັມເຣື່ອງນີ້ ບັນຈຸຖ້ອຍຄຳທີ່ພຣະຜູ້ເປັນເຈົ້າສົ່ງເຖິງມີກາ ຊາວເມືອງໂມເຣເຊທ ໃນສມັຍຂອງໂຢທາມ
ອາຮັສ ແລະເຮເຊກີຢາ ເປັນກະສັດຂອງຊາວຢູດາ ພຣະຜູ້ເປັນເຈົ້າໄດ້ຊົງສະແດງສິ່ງທີ່ຈະເວົ້າດັ່ງຕໍ່ລົງໄປນີ້ ທີ່
ກ່ຽວກັບເມືອງຊາມາເຣັຽ ແລະເມືອງເຢຣູຊາເລັມຕໍ່ ມີກາ

Judgment Pronounced against Samaria

2 ຈົ່ງຟັງເຣື່ອງນີ້ ຊົນຊາດທັງຫລາຍເອີຍ, ຈົ່ງຟັງເຣື່ອງນີ້ ປວງຊົນທີ່ອາສັຍຢູ່ເທິງແຜ່ນດິນໂລກ ພຣະຜູ້ເປັນເຈົ້າ
ຈະເປັນພຍານຕໍ່ສູ້ເຈົ້າ ຈົ່ງຟັງແມ, ສຽງຂອງພຣະອົງສົ່ງລົງມາຈາກພຣະວິຫານບ່ອນສັກສິດຂອງພຣະອົງ
3 ພຣະຜູ້ເປັນເຈົ້າກຳລັງສະເດັດມາແຕ່ເບື້ອງເທິງ ພຣະອົງຈະຊົງສະເດັດລົງມາຍ່າງເທິງຈອມພູທັງຫລາຍ
4 ແລ້ວພູທັງຫລາຍຈະເປື່ອຍລະລາຍໄປໃຕ້ພຣະບາດຂອງພຣະອົງ ເຫມືອນດັ່ງຂີ້ເຜີ້ງຖືກໄຟ ມັນຈະໄຫລລົງສູ່
ຮ່ອມພູ ເຫມືອນດັ່ງນໍ້າໄຫລລົງມາແຕ່ພູ
5 ເຫດການທັງປວງນີ້ບັງເກີດຂຶ້ນ ກໍເພາະວ່າປະຊາຊົນອິສຣາເອນໄດ້ກະທຳບາບ ແລະກະບົດຕໍ່ສູ້ພຣະເຈົ້າ ເປັນ
ຄວາມຜິດຂອງໃຜທີ່ອິສຣາເອນເປັນກະບົດ ແມ່ນປະຊາຊົນຊາມາເຣັຽຫັ້ນແລ້ວ ໃຜບູຊາຮູບໂຄຣົບໃນປະເທດ
ຢູດາ ແມ່ນປະຊາຊົນເຢຣູຊາເລັມຫັ້ນແລ້ວ
6 ສະນັ້ນ ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເຮົາຈະທຳໃຫ້ຊາມາເຣັຽເປັນກອງສິ່ງຫັກເພພັງຢູ່ໃນທົ່ງນາ ແລະໃຫ້ເປັນ
ສວນສຳລັບປູກຕົ້ນອະງຸ່ນ ເຮົາຈະເທກ້ອນຫີນທີ່ໃຊ້ສ້າງເມືອງນັ້ນລົງທີ່ຮ່ອມພູ ແລະຈະໃຫ້ເຫັນຮາກຖານຂອງ
ເມືອງ
7 ຮູບໂຄຣົບທັງຫມົດຈະຖືກທຸບໃຫ້ຫມຸ່ນ ແລະຖືກທຳລາຍດ້ວຍໄຟ ປະຊາຊົນໄດ້ຮູບໂຄຣົບເຫລົ່ານັ້ນມາຢ່າງບໍ່
ສັດຊື່ຕໍ່ພຣະເຈົ້າ ແລະບັດນີ້ ພວກເຂົາຈະໄດ້ໂທດຈາກການບໍ່ສັດຊື່ນັ້ນຢ່າງເຫມາະສົມ”

The Doom of the Cities of Judah

8 ແລ້ວມີກາເວົ້າຕໍ່ໄປວ່າ, “ກໍເພາະເຫດເຫລົ່ານີ້ແຫລະ, ຂ້າພະເຈົ້າຈຶ່ງເສົ້າໃຈແລະຄໍ່າຄວນ ຂ້າພະເຈົ້າຈະຍ່າງ
ຕີນເປົ່າແລະເປືອຍກາຍ ເພື່ອສະແດງຄວາມເສົ້າຫມອງໃຈ ຂ້າພະເຈົ້າຈະຫອນເຫມືອນຫມາປ່າແລະອີດຄາງ
ເຫມືອນນົກຈອກປ່າ
9 ເພາະວ່າບາດແຜຂອງເມືອງຊາມາເຣັຽຮັກສາໃຫ້ດີບໍ່ໄດ້ ເມືອງຢູດາກໍກຳລັງຈະເປັນບາດແຜຄືກັນ ເພາະການ
ທຳລາຍໄດ້ມາຮອດປະຕູເມືອງເຢຣູຊາເລັມ ບ່ອນທີ່ປະຊາຊົນໄດ້ອາສັຍຢູ່ແລ້ວ”

**ສັດຕຣູມາໃກ້ເມືອງເຢຣູຊາເລັມ**

10 ຢ່າໄດ້ບອກເຣື່ອງຜ່າຍແພ້ຂອງພວກເຮົາ ໃຫ້ຊາວເມືອງກາດຮູ້ ຢ່າໃຫ້ພວກເຂົາເຫັນການຮ້ອງໄຫ້ຂອງພວກ
ເຮົາ ຈົ່ງກິ້ງເກືອກຢູ່ໃນຂີ້ຝຸ່ນດ້ວຍຄວາມສິ້ນຫວັງໃນເມືອງເບດເລອາຟຣາ

11 ຊາວເມືອງຊາຟີເອີຍ, ຈົ່ງໜີໄປຕ່າງຖິ່ນຢ່າງສິ້ນເນື້ອປະດາຕົວ ແລະຢ່າງອັບອາຍຂາຍໜ້າ ພວກທີ່ອາສັຍຢູ່ໃນເມືອງຊາອານານ ຈະບໍ່ມີຊີວິດລອດອອກມາໄດ້ ເມື່ອພວກເຈົ້າໄດ້ຍິນຊາວເບເທເຊນ ຮ້ອງໄຫ້ຮ່ຳໄຮ ເຈົ້າຈົ່ງຮູ້ເສັຽວ່າ ບ່ອນນັ້ນບໍ່ແມ່ນບ່ອນລີ້ພັຍເສັຽແລ້ວ

12 ຊາວເມືອງມາໂຣດເຈັບແສບຢ່າງສາຫັດ ພວກເຂົາຕ້ອງການຄວາມບັນເທົາ ກໍຍ້ອນວ່າພຣະຜູ້ເປັນເຈົ້າໄດ້ນຳຄວາມຫາຍຍະນະໃກ້ເມືອງເຢຣູຊາເລັມ

13 ພວກເຈົ້າທີ່ອາສັຍຢູ່ໃນເມືອງລາຄິສ ຈົ່ງເອົາມ້າໃສ່ກວຽນຂອງເຈົ້າຕຽມໄວ້ ເຈົ້າເລີ້ມສ້າງບາບກັມໃຫ້ແກ່ບຸດຕຣີຂອງຊີໂອນ ເພາະໄດ້ພົບການທໍຣະຍົດຂອງອິສຣາເອນໃນເຈົ້າ

14 ເພາະສະນັ້ນ ເຈົ້າຈົ່ງສັ່ງລາເມືອງໂມເຣເຊທກາດ ພວກກະສັດອິສຣາເອນຈະບໍ່ໄດ້ຮັບການຊ່ອຍເຫລືອຈາກເມືອງອັກຊິບເລີຍ

15 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ຊາວເມືອງມາເຣຊາເອີຍ, ເຮົາຈະມອບເຈົ້າໃຫ້ສັດຕຣູທີ່ກຳລັງຈະຍຶດເອົາເມືອງຂອງພວກເຈົ້າ ສ່ວນກະສັດອິສຣາເອນກໍຈະປົບໜີໄປລີ້ຢູ່ໃນຖ້ຳທີ່ອາດຸນລາມ

16 ຈົ່ງແຖຫົວຂອງພວກເຈົ້າ ເພື່ອໄວ້ທຸກໃຫ້ແກ່ບຸດທີ່ຮັກຂອງພວກເຈົ້າສາ  ຈົ່ງແຖຫົວໃຫ້ໂລ້ນເໝືອນແຮ້ງ ກໍເພາະວ່າ ພວກບຸດຂອງພວກເຈົ້າຈະຖືກເອົາໜີໄປເລີຍ

## 2 ເຄາະກັມຂອງພວກທີ່ບີບບັງຄັບຄົນຈົນ

Social Evils Denounced

1 ຜູ້ທີ່ນອນຄິດວາງແຜນການກະທຳຄວາມຊົ່ວ ຈະໄດ້ຮັບຄວາມວິບັດຢ່າງໜັກ ເມື່ອຮຸ່ງເຊົ້າຂຶ້ນ ພໍເຂົາໄດ້ໂອກາດພວກເຂົາກໍເຮັດຄວາມຊົ່ວທີ່ໄດ້ວາງແຜນໄວ້ນັ້ນ

2 ເມື່ອພວກເຂົາຕ້ອງການທີ່ງນາ ແລະບ້ານເຮືອນພວກເຂົາກໍຍຶດເອົາໄປ ພວກເຂົາໃຊ້ກຳລັງແລະເລ້ຫລ່ຽມຫລອກເອົາເຮືອນແລະທີ່ດິນຂອງເຈົ້າຊັບ

3 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວວ່າ, "ເຮົາກຳລັງວາງແຜນເອົາພັຍວິບັດມາໃສ່ພວກເຈົ້າ ຊຶ່ງບໍ່ມີໃຜຈະຫລົບຫລີກໄດ້ ພວກເຈົ້າຈະຍ່າງໄປຢ່າງສະງ່າຜ່າເຜີຍຕໍ່ໄປບໍ່ໄດ້ອີກ ເພາະວ່າມັນເປັນຍາມເຄາະຮ້າຍສຳລັບພວກເຈົ້າ

4 ເວລາຍາມນັ້ນມາຮອດ ຈະມີຄົນເອົາເຣື່ອງຂອງພວກເຈົ້າມາກ່າວເປັນຄຳຂວັນ ໃນຄາວພັຍວິບັດແລະຮ້ອງເພງອັນຂົມຂື່ນນີ້ວ່າ, "ພວກເຮົາພິນາດໄປຈົນໝົດກ້ຽງສາແລ້ວ ພຣະຜູ້ເປັນເຈົ້າໄດ້ຍຶດເອົາດິນໝູ່ເຮົາໄປແລ້ວເອົາໄປມອບໃຫ້ສັດຕຣູ"

5 ດັ່ງນັ້ນ ບໍ່ມີໃຜໃນພວກເຈົ້າຈະໄດ້ຮັບດິນຕອນນຶ່ງຕອນໃດໃນມື້ທີ່ແບ່ງປັນດິນ ລະຫວ່າງໄພ່ພົນຂອງພຣະຜູ້ເປັນເຈົ້າ

6 ປະຊາຊົນເທສນາສັ່ງສອນຂ້າພະເຈົ້າວ່າ, "ຢ່າສັ່ງສອນພວກເຮົາກ່ຽວກັບເຣື່ອງເຫລົ່ານັ້ນເລີຍ ພຣະເຈົ້າຈະບໍ່ເຮັດໃຫ້ພວກເຮົາເສື່ອມເສັຽດອກ ປະຊາຊົນອິສຣາເອນໄດ້ຖືກສາບແຊ່ງຊັ້ນບໍ່

7 ພຣະຜູ້ເປັນເຈົ້າໝົດຄວາມອົດທົນແລ້ວຫລື ພຣະອົງຈະກະທຳສິ່ງເຫລົ່ານັ້ນອີ່ຫລີບໍ ພຣະອົງຈະບໍ່ກ່າວຢ່າງເປັນມິດຕໍ່ຜູ້ທີ່ປະພຶດຊອບທັມບໍ່

8 ພຣະຜູ້ເປັນເຈົ້າຊົງຕອບວ່າ, "ພວກເຈົ້າເອງເປັນປໍຣະປັກຕໍ່ໄພ່ພົນຂອງເຮົາ ພວກເຈົ້າໄດ້ລັກເອົາແມ້ແຕ່ເສື້ອຂອງຄົນທີ່ຢູ່ຢາງສງົບ ຄືບັນດາຜູ້ທີ່ກັບຈາກສນາມຣົບຊຶ່ງຄິດວ່າຕົນປອດພັຍແລ້ວ

9 ພວກເຈົ້າຂັບໄລ່ພວກຜູ້ຍິງໄພ່ພົນຂອງເຮົາອອກຈາກເຮືອນອັນຜາສຸກຂອງພວກເຂົາ ແລະຍັງໃຫ້ລູກຂອງພວກເຂົາບໍ່ໄດ້ຮັບພອນຂອງເຮົາຕລອດໄປ

10 ຈົ່ງໜີໄປສາ ບ່ອນທີ່ບໍ່ມີທີ່ພັກພາອາສັຍ ຍ້ອນຄວາມບາບພວກເຈົ້າຈຶ່ງຈະພົບກັບຄວາມພິນາດອັນຮ້າຍແຮງ

11 ບຸກຄົນຜູ້ນຶ່ງຊຶ່ງທ່ຽວໄປຕົວະ ແລະຫລອກລວງປະຊາຊົນໂດຍກ່າວວ່າ ນ້ຳອະງຸ່ນແລະສຸຣາຈະຫລັ່ງໄຫລມາສຳ
ລັບພວກເຈົ້າ ອັນນີ້ ຄືການທຳນວາຍຢ່າງນຶ່ງທີ່ປະຊາຊົນມັກ

A Promise for the Remnant of Israel

12 ແຕ່ເຮົາຈະທ້ອນໂຮມປະຊາຊົນອິສຣາເອນທັງຫມົດ ພ້ອມທັງພວກທີ່ເຫລືອຢູ່ ເຮົາຈະທ້ອນໂຮມພວກເຈົ້າໃຫ້
ຢູ່ນຳກັນເຫມືອນຝູງແກະຢູ່ໃນຄອກ ແລະເຫມືອນຝູງສັດຢູ່ໃນທົ່ງຫຍ້າ ດິນແດນຂອງພວກເຈົ້າຈະເຕັມໄປ
ດ້ວຍສຽງຂອງຝູງຊົນທັງຫລາຍ”

13 ພຣະເຈົ້າຈະໄຂທົນທາງສຳລັບນຳພວກເຂົາອອກໄປ ພວກເຂົາຈະຫລຸອອກໄປທາງປະຕູເຂົ້າເມືອງແລະໄປ
ຢ່າງມີອິສຣະ ພຣະຜູ້ເປັນເຈົ້າຜູ້ຈະເປັນເຈົ້າຊີວິດຂອງພວກເຂົາຈະນຳພາອອກໄປ

## 3 ມີກາກ່າວໂທດຜູ້ນຳອິສຣາເອນ

Wicked Rulers and Prophets

1 ບັນດາຜູ້ປົກຄອງອິສຣາເອນເອີຍ, ຈົ່ງຟັງພວກເຈົ້າຄວນຈະເປັນຜູ້ຮັກສາຄວາມຍຸດຕິທັມ

2 ແຕ່ພວກເຈົ້າກຽດຊັງຄວາມດີ ແລະຮັກຄວາມຊົ່ວ ພວກເຈົ້າຂູດຮີດ ແລະທໍຣະມານໄພ່ພົນຂອງເຮົາຢ່າງທາ
ຣຸນຄື

3 ພວກເຈົ້າກັດກິນຊີ້ນ ແລະລອກຫນັງຂອງພວກເຂົາອອກ ຫັກກະດູກຂອງພວກເຂົາ ແລະຕັດໃຫ້ເປັນຕ່ອນໆ
ເຫມືອນຊີ້ນຢູ່ໃນຫມໍ້

4 ແລະຈະມີວັນນຶ່ງທີ່ພວກເຈົ້າຈະຮ້ອງຫາພຣະຜູ້ເປັນເຈົ້າ ແຕ່ພຣະອົງຈະບໍ່ຊົງຕອບພວກເຈົ້າ ພຣະອົງຈະບໍ່ຟັງ
ການອ້ອນວອນຂອງພວກເຈົ້າ ກໍເພາະວ່າພວກເຈົ້າໄດ້ປະພຶດຊົ່ວ

5 ປະຊາຊົນໄດ້ຖືກຜູ້ປະກາດພຣະທັມຫລອກລວງ ຄືພວກສັນຍາໃຫ້ຄວາມສງົບແກ່ຜູ້ທີ່ລ້ຽງພວກເຂົາ ແຕ່ນາບຂູ່
ເອົາເສິກສົງຄາມມາສູ່ຜູ້ທີ່ບໍ່ໄດ້ຍິນຍອມປະຕິບັດຕາມ ສຳລັບພວກຜູ້ປະກາດພຣະທັມເຫລົ່ານັ້ນ ພຣະຜູ້ເປັນ
ເຈົ້າຊົງກ່າວແກ່ເຂົາວ່າ,

6 “ກໍຍ້ອນວ່າ ພວກເຈົ້າໄດ້ນຳໄພ່ພົນຂອງເຮົາໄປໃນທາງທີ່ຜິດ ພວກເຈົ້າຈະບໍ່ມີນິມິດອີກຕໍ່ໄປ ແລະພວກເຈົ້າ
ຈະບໍ່ສາມາດທຳນວາຍເຣື່ອງໃດໆໄດ້ເລີຍ ພວກຜູ້ປະກາດພຣະທັມເອີຍ, ຄວາມສຳຄັນຂອງພວກເຈົ້າກໍໃກ້ຈະ
ຫມົດແລ້ວ ດັ່ງຕາເວັນກຳ
ລັງຈະຕົກ

7 ຜູ້ທີ່ທຳນວາຍເຫດການໃນອະນາຄົດ ຈະໄດ້ຮັບຄວາມອັບອາຍຂາຍຫນ້າ ຈາກການລົ້ມເຫລວຂອງພວກເຂົາ
ພວກເຂົາທຸກຄົນເສັຽໃຈກໍຍ້ອນວ່າ ພຣະເຈົ້າບໍ່ໄດ້ປະທານຄຳຕອບໃຫ້ແກ່ເຂົາ

8 ແຕ່ສຳລັບຂ້າພະເຈົ້າແລ້ວ ຂ້າພະເຈົ້າເຕັມໄປດ້ວຍພຣະວິນຍານຂອງພຣະຜູ້ເປັນເຈົ້າ ຄືດ້ວຍຣິດເດດ ດ້ວຍ
ຄວາມຍຸດຕິທັມ ແລະດ້ວຍຄວາມກ້າຫານ ເພື່ອບອກປະຊາຊົນອິສຣາເອນໃຫ້ສຳນຶກເຖິງຄວາມບາບຂອງ
ພວກເຂົາ

9 ບັນດາຜູ້ປົກຄອງອິສຣາເອນເອີຍ, ຈົ່ງຟັງຂ້າພະເຈົ້າເທີ້ນ ພວກເຈົ້າກຽດຊັງຄວາມຍຸດຕິທັມ ແລະປ່ຽນຄວາມ
ຊອບທັມມາເປັນຄວາມອະທັມ

10 ພວກເຈົ້າສ້າງເຢຣູຊາເລັມ ເມືອງຂອງພຣະເຈົ້າຂຶ້ນມາດ້ວຍການຄາດຕະກັມແລະດ້ວຍການອະທັມ

11 ບັນດາພວກຜູ້ປົກຄອງເມືອງ ກໍປົກຄອງດ້ວຍເຫັນແກ່ສິນບົນ ບັນດາປະໂຣຫິດກໍໃຊ້ກົດຫມາຍເພື່ອເຫັນແກ່ສິນ
ຈ້າງຣາງວັນ ບັນດາຜູ້ປະກາດພຣະທັມກໍຖວາຍດ້ວຍເຫັນແກ່ເງິນ ແລະພວກເຂົາທັງຫມົດຍັງອ້າງວ່າ ພຣະຜູ້
ເປັນເຈົ້າໄດ້ສະຖິດຢູ່ກັບພວກເຂົາໂດຍເວົ້າວ່າ, “ພຣະຜູ້ເປັນເຈົ້າໄດ້ສະຖິດຢູ່ນຳເຮົາແມ່ນບໍ? ບໍ່ມີພັຍອັນຕະ
ຣາຍໃດໆຈະມາເຖິງພວກເຮົາດອກ”

12 ດ້ວຍເຫດນີ້ແຫລະ, ຍ້ອນພວກເຈົ້າເມືອງຊີໂອນຈະຖືກໄຖເຫມືອນດັ່ງໄຖນາ ເຢຣູຊາເລັມຈະກາຍເປັນກອງສິ່ງ
ສລັກຫັກເພພັງແລະພູເຂົາວິຫານຈະເປັນປ່າ

## 4 ພຣະຜູ້ເປັນເຈົ້າແຫ່ງສາກົນລະໂລກປົກຄອງດ້ວຍສັນຕິສຸກ

Peace and Security through Obedience

(ອຊຢ 2:2-4)

1 ໃນຍຸກຕໍ່ມາ ຈະເປັນດັ່ງນີ້ຄື ພູເຂົາບ່ອນພຣະວິຫານຕັ້ງຢູ່ ຈະເປັນພູເຂົາທີ່ສູງສຸດ ໃນຈຳນວນພູທັງຫລາຍ
ຫລາຍຊົນຊາດຈະຫລັ່ງໄຫລມາຫາ
2 ທີ່ນັ້ນແລະປະຊາຊົນຂອງຊົນຊາດເຫລົ່ານັ້ນຈະເວົ້າວ່າ, “ມາເທາະ, ເຮົາພາກັນໄປຍັງພູເຂົາຂອງພຣະຜູ້ເປັນ
ເຈົ້າ ຂຶ້ນໄປຍັງພຣະວິຫານຂອງພຣະເຈົ້າອິສຣາເອນ ພວກເຮົາຈະໄດ້ຮູ້ສິ່ງທີ່ພຣະອົງຕ້ອງການໃຫ້ພວກເຮົາ
ເຮັດ ພວກເຮົາຈະເດີນໄປໃນຫົນທາງທີ່ພຣະອົງຊົງໄດ້ເລືອກໄວ້” ພຣະທັມຂອງພຣະຜູ້ເປັນເຈົ້າມາຈາກເຢຣູ
ຊາເລັມ ຈາກຊີໂອນບ່ອນທີ່ພຣະອົງຊົງເວົ້າກັບໄພ່ພົນຂອງພຣະອົງ
3 ພຣະອົງຈະຊົງໄກ່ເກັ່ງການຜິດຖຽງກັນລະຫວ່າງຊົນຊາດແລະເປັນຜູ້ພິພາກສາຄະດີລະຫວ່າງມະຫາອຳນາດ
ທັງຫລາຍທີ່ຢູ່ຫ່າງໄກຈາກອິສຣາເອນ ພວກເຂົາຈະຕີດາບໃຫ້ເປັນຫນາກາສິບໄຖ ແລະຈະຕີຫອກໃຫ້ເປັນມີດ
ຕັດກິ່ງໄມ້ ຊົນຊາດທັງຫລາຍຈະບໍ່ເຮັດເສິກຕໍ່ສູ້ກັນອີກຕໍ່ໄປ ຫລືຈະບໍ່ຈັດຕຽມເພື່ອເຮັດເສິກອີກ
4 ທຸກໆຄົນຢູ່ໃນຄວາມສງົບສຸກ ຢູ່ໃຕ້ຮົ່ມອະງຸ່ນ ແລະຕົ້ນຫມາກເດື່ອຂອງຕົນ ໂດຍບໍ່ມີໃຜເຮັດໃຫ້ເຂົາຢ້ານກົວ
ພຣະຜູ້ເປັນເຈົ້າຜູ້ມີອຳນາດຍິ່ງໃຫຍ່ໄດ້ສັນຍາໄວ້ດັ່ງນີ້
5 ແຕ່ລະຊົນຊາດນະມັສການ ແລະເຊື່ອຟັງພຣະເຈົ້າຂອງພວກຕົນແຕ່ພວກເຮົາຈະນະມັສການ ແລະເຊື່ອຟັງພ
ຣະຜູ້ເປັນເຈົ້າຂອງພວກເຮົາຕລອດໄປເປັນນິດ

**ອິສຣາເອນຈະກັບຄືນສູ່ປະເທດເດີມ**

Restoration Promised after Exile

6 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມື່ອຍາມຂອງເຮົາມາຮອດແລ້ວ ເຮົາຈະທ້ອນໂຮມໄພ່ພົນຂອງເຮົາ ຊຶ່ງແມ່ນ
ພວກທີ່ເຮົາໄດ້ລົງໂທດ ແລະໄດ້ຮັບກຳຈາກການເນລະເທດ
7 ພວກເຂົາເປັນຄົນອ່ອນແຮງແລະຫ່າງໄກຈາກເຮືອນຊານບ້ານຊ່ອງ ແຕ່ເຮົາຈະໃຫ້ເຂົາຕັ້ງປະເທດໃຫມ່ ແລະ
ຈະກາຍເປັນປະເທດທີ່ຍິ່ງໃຫຍ່ ເຮົາຈະປົກຄອງພວກເຂົາຕລອດກາລະນານຢູ່ເທິງພູຊີໂອນ
8 ເຢຣູຊາເລັມບ່ອນທີ່ພຣະເຈົ້າຊົງເຝົ້າເບິ່ງໄພ່ພົນຂອງພຣະອົງເອີຍ, ເຈົ້າຈະເປັນເມືອງເອກຂອງຣາຊອານາຈັກ
ອິສຣາເອນອີກເທື່ອນຶ່ງ
9 ເປັນຫຍັງເຈົ້າຈຶ່ງຮ້ອງໄຫ້ສຽງດັງແທ້? ເປັນຫຍັງພວກເຈົ້າຈຶ່ງເຈັບປວດເຫມືອນຜູ້ຍິງອອກລູກ? ບໍ່ແມ່ນພວກ
ເຈົ້າບໍ່ມີກະສັດປົກຄອງບໍ່? ແລະພວກທີ່ປຶກສາຂອງພວກເຈົ້າຕາຍຫມົດແລ້ວບໍ່?
10 ປະຊາຊົນອິສຣາເອນເອີຍ, ເຈົ້າເຈັບປວດ ແລະຮ້ອງຄາງເຫມືອນຍິງອອກລູກ ມາບັດນີ້ ພວກເຈົ້າຕ້ອງຫນີຈາກ
ເມືອງນີ້ໄປຢູ່ໃນທົ່ງນາ ແລ້ວພວກເຈົ້າຕ້ອງໄປເມືອງບາບີໂລນ ເພາະວ່າໃນທີ່ນັ້ນ ພຣະຜູ້ເປັນເຈົ້າຈະຊົດຊ່ອຍ
ພວກເຈົ້າໃຫ້ພົ້ນພັຍຈາກອຳນາດຂອງສັດຕຣູ
11 ຫລາຍຊົນຊາດໄດ້ຮ່ວມມືກັນໂຈມຕີເຈົ້າ ພວກເຂົາເວົ້າວ່າ, “ຈົ່ງໃຫ້ມັນຫມົດຄວາມສັກສິດ ໃຫ້ຕາຂອງເຮົາ
ເພ່ງເບິ່ງ ຊີໂອນ”
12 ແຕ່ຊົນຊາດເຫລົ່ານັ້ນບໍ່ຮູ້ຈັກພຣະດຳຣັດຂອງພຣະຜູ້ເປັນເຈົ້າ ພວກເຂົາບໍ່ຮູ້ຈັກວ່າ ພຣະອົງໄດ້ວາງແຜນການ
ທ້ອນໂຮມພວກເຂົາ ເພື່ອເອົາມາລົງໂທດດັ່ງດຽວກັນກັບໂຮມເອົາມັດເຂົ້າມາຟາດໃນລານ

13 ໂອ ບຸດຕຣີ ຊີໂອນເອີຍ, ຈົ່ງລຸກຂຶ້ນແລະນວດເຂົ້າເຖີດເອີຍ, ເຮົາຈະທຳໃຫ້ພວກເຈົ້າແຂງແຮງເຫມືອນດັ່ງງົວກະ
ທິງທີ່ມີເຂົາເຫລັກ ແລະມີຕີນໂລຫະ ພວກເຈົ້າຈະຢຽບທຳລາຍຫລາຍປະເທດໃຫ້ມຸ່ນ ແລະຊັບສິນບັດຂອງ
ພວກເຂົາຈະເປັນຂອງເຮົາ ສິ່ງເຫລົ່ານັ້ນຈະຖືກຖວາຍໃຫ້ແກ່ພຣະຜູ້ເປັນເຈົ້າແຫ່ງພິພົບທັງຫມົດ

## 5

Chapter 5

1 ປະຊາຊົນອິສຣາເອນເອີຍ, ຈົ່ງຕຽມພົນໄວ້ຮົບເສິກ ເພາະສັດຕຣູລ້ອມເຮົາໄວ້ແລ້ວ ແລະຜູ້ນຳອິສຣາເອນກໍຖືກ
ສັດຕຣູຕີຫນ້າແລ້ວ

**ພຣະຜູ້ເປັນເຈົ້າຊົງສັນຍາຈະປະທານຜູ້ປົກຄອງຈາກເມືອງເບັດເລເຮັມ**

The Ruler from Bethlehem

2 ເບັດເລເຮັມ ເອຟຣາທາເອີຍ, ເຈົ້າເປັນເມືອງນ້ອຍເມືອງນຶ່ງໃນເຂດຢູດາ ແຕ່ວ່າ ເຮົາຈະແຕ່ງໃຫ້ມີຜູ້ນຶ່ງມາປົກ
ຄອງພວກອິສຣາເອນຫນໍ່ເຊື້ອສາຍຂອງທ່ານຈະມາຈາກສມັຍເດີມ
3 ດັ່ງນັ້ນ ພຣະຜູ້ເປັນເຈົ້າ ຈະປະໄພ່ພົນຂອງພຣະອົງໃຫ້ສັດຕຣູ ຈົນເຖິງເວລາທີ່ຍິງຖືພາຄອດບຸດ
ຄົນແລ້ວ ບັນດາພີ່ນ້ອງໃນເມືອງທີ່ຍັງຖືກເນລະເທດກໍຈະມາທ້ອນໂຮມກັນກັບປະຊາຊົນອິສຣາເອນ
4 ເວລາຜູ້ນັ້ນມາ ທ່ານຈະມາປົກຄອງປະຊາຊົນດ້ວຍອຳນາດມາແຕ່ພຣະຜູ້ເປັນເຈົ້າ ແລະດ້ວຍຄວາມສະງ່າຣາ
ສີ ປະຊາຊົນຂອງທ່ານຈະຢູ່ຢ່າງປອດພັຍ ກໍຍ້ອນວ່າມະນຸດທຸກໆຄົນໃນໂລກ ຈະຮັບຮູ້ທ່ານ
5 ແລະທ່ານຈະເປັນຜູ້ນຳເອົາຄວາມສງົບສຸກມາ

**ການຊ່ອຍໃຫ້ພົ້ນແລະການລົງໂທດ**

ເມື່ອຊາວອັສຊີເຣັຽຢຽບຢ່ຳແລະບຸກລຸກຄຸກຄາມດິນແດນຂອງພວກເຮົາ ພວກເຮົາຈະສົ່ງພວກຜູ້ລ້ຽງແກະເຈັດ
ຄົນແລະຜູ້ນຳ ແປດຄົນມາຕໍ່ສູ້ພວກເຂົາ
6  ພວກຜູ້ນຳຈະຍຶດເອົາດິນແດນຂອງອັສຊີເຣັຽມາປົກຄອງດ້ວຍກຳລັງ ເມື່ອຊາວອັສຊີເຣັຽບຸກລຸກຄຸກຄາມດິນ
ແດນຂອງພວກເຮົາ ພວກຜູ້ນຳກໍຈະຊ່ອຍພວກເຮົາໃຫ້ພົ້ນພັຍດ້ວຍວິທີຍຶດຄອງນັ້ນ

The Future Role of the Remnant

7 ປະຊາຊົນອິສຣາເອນຜູ້ຍັງມີຊີວິດເຫລືອຢູ່ກໍຈະເປັນເຫມືອນນໍ້າຄ້າງອັນສົດຊື່ນທີ່ພຣະຜູ້ເປັນເຈົ້າເຫລົ່ງມາສຳ
ລັບຊົນຊາດແລະເຫມືອນຫ່າຝົນທີ່ຕົກເທິງຫຍ້າກຳລັງປົ່ງ ພວກເຂົາຈະອາສັຍພຣະເຈົ້າບໍ່ແມ່ນອາສັຍມະນຸດ
8 ປະຊາຊົນອິສຣາເອນບາງຄົນທີ່ຍັງເຫລືອຢູ່ຈະຢູ່ຖ້າມກາງຊົນຊາດຕ່າງໆ ພວກເຂົາຈະເປັນເຫມືອນໂຕສິງທີ່
ກຳລັງຊອກຫາອາຫານໃນປ່າ ຫລືໃນທົ່ງຫຍ້າ ມັນຄຸບເອົາແກະໃນຝູງແລ້ວຈີກເປັນຕ່ອນໆ ແລະບໍ່ມີແກະຕົວ
ໃດໃນທີ່ນັ້ນຈະລອດພົ້ນຈາກມັນໄປໄດ້
9 ອິສຣາເອນຈະຜາບແພ້ສັດຕຣູ ແລະທຳລາຍພວກເຂົາທຸກຄົນຈົນຫມົດກ້ຽງ
10 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ໃນເວລານັ້ນ ເຮົາຈະເອົາມ້າຂອງພວກເຈົ້າຫນີໄປ ແລະຈະທຳລາຍຣົດຮົບຂອງ
ພວກເຈົ້າ
11 ເຮົາຈະຢຽບຢ່ຳຄ້າຍປ້ອງກັນໃຫ້ຫມົດ ແລະທຳລາຍເມືອງທັງຫລາຍໃນດິນແດນຂອງເຈົ້າ
12 ເຮົາຈະທຳລາຍເຄື່ອງລາງຂອງດີທີ່ເຈົ້າໃຊ້ແລະບໍ່ໃຫ້ມີຫມໍມໍອີກຕໍ່ໄປ
13 ເຮົາຈະທຳລາຍຮູບໂຄຣົບ ແລະເສົາສັກສິດທີ່ພວກເຈົ້າໄດ້ນະມັສການ ພວກເຈົ້າຈະບໍ່ໄດ້ນະມັສການສິ່ງທີ່
ພວກເຈົ້າໄດ້ເຮັດນັ້ນອີກຕໍ່ໄປ
14 ເຮົາຈະຖອນຫລັກສັກສິດໃນປະເທດຂອງພວກເຈົ້າ ແລະທຳລາຍທົວເມືອງຕ່າງໆຂອງພວກເຈົ້າ
15 ແລະດ້ວຍຄວາມຮ້າຍອັນໃຫຍ່ຂອງເຮົາ ເຮົາຈະແກ້ແຄ້ນຊົນຊາດທັງຫລາຍທີ່ບໍ່ເຊື່ອຟັງເຮົາ”

## 6 ພຣະຜູ້ເປັນເຈົ້າສູ້ຄວາມກັບອິສຣາເອນ

God Challenges Israel

1 ຈົ່ງຟັງ ພຣະຜູ້ເປັນເຈົ້າສູ້ຄວາມກັບອິສຣາເອນ ພຣະຜູ້ເປັນເຈົ້າຈົ່ງລຸກຂຶ້ນແລ້ວຖແລງຄະດີຂອງພຣະອົງຕໍ່ພູ
ເຂົາ ເພື່ອເປັນ ພຍານຂໍໃຫ້ເນີນພູໄດ້ຍິນສິ່ງທີ່ພຣະອົງຊົງກ່າວ
2 ພູເຂົາທັງຫລາຍ ແລະຮາກຖານອັນຫມັ້ນຄົງຂອງພິພົບເອີຍ, ຈົ່ງຟັງຄະດີຂອງພຣະຜູ້ເປັນເຈົ້າແມ, ພຣະຜູ້ເປັນ
ເຈົ້າກຳລັງສູ້ຄວາມກັບໄພ່ພົນຂອງພຣະອົງ ພຣະອົງກຳລັງກ່າວໂທດຕໍ່ປະຊາຊົນອິສຣາເອນ
3 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ໄພ່ພົນຂອງເຮົາເອີຍ, ເຮົາໄດ້ເຮັດຫຍັງແດ່ແກ່ເຈົ້າ ເຮົາໄດ້ເຮັດຫຍັງໃຫ້ເຈົ້າລຳ
ບາກຍາກແຄ້ນແດ່  ຈົ່ງຕອບເຮົາມາເບິ່ງດູ ເຮົາໄດ້ນຳພວກເຈົ້າອອກຈາກປະເທດເອຢິບ
4 ເຮົາໄດ້ໄຖ່ພວກເຈົ້າອອກຈາກການເປັນຂ້າທາດ ເຮົາໄດ້ສົ່ງໂມເຊ ອາໂຣນ ແລະນາງມີຣິອາມເພື່ອເປັນຜູ້ນຳ
ພາພວກເຈົ້າ
5 ໄພ່ພົນຂອງເຮົາເອີຍ, ຈົ່ງລະນຶກເຖິງສິ່ງທີ່ລຳບາກ ເຈົ້າຊີວິດແຫ່ງໂມອາບວາງແຜນຕໍ່ສູ້ເຈົ້າ ແລະຈົ່ງລະນຶກເຖິງ
ຖ້ອຍຄຳທີ່ບາລາອາມ ບຸດຊາຍຂອງເບໂອຣ໌ຕອບກະສັດວ່າຢ່າງໃດ? ຂໍໃຫ້ລະນຶກເຖິງສິ່ງທັງຫລາຍທີ່ເກີດຂຶ້ນ
ອີກໃນລະຫວ່າງທາງແຕ່ເມືອງຊິດຕິມຫາເມືອງກິນການ ເພື່ອວ່າເຈົ້າຈະໄດ້ສຳນຶກໃນສິ່ງທີ່ເຮົາໄດ້ທຳເພື່ອ
ຊ່ອຍຊີວິດຂອງພວກເຈົ້າ”

**ພຣະຜູ້ເປັນເຈົ້າຕ້ອງການຫຍັງຈາກມະນຸດ**

What God Requires

(ອມສ 5:24)

6 ເມື່ອຂ້າພຣະອົງມານະມັສການພຣະຜູ້ເປັນເຈົ້າແຫ່ງສວັນ ຂ້າພຣະອົງຈະນຳເອົາສິ່ງໃດເຂົ້າມາເຝົ້າພຣະອົງ
ຂ້າພຣະອົງຈະນຳເອົາລູກງົວຕົວຕຸ້ຍພີທີ່ສຸດມາເຜົາຖວາຍບູຊາພຣະອົງບໍ່?
7 ພຣະຜູ້ເປັນເຈົ້າຈະພໍພຣະທັຍບໍ່  ຖ້າຂ້າພຣະອົງນຳແກະພັນໂຕ ຫລືຖັງນ້ຳມັນສິດອັນບໍ່ຫມົດເປັນຈັກເທື່ອມາ
ຖວາຍພຣະອົງ  ຂ້າພຣະອົງຄວນຖວາຍບຸດຫົວປີໃຫ້ພຣະອົງ ເພື່ອໄຖ່ຄວາມບາບຂອງຂ້າພຣະອົງ
8 ມະນຸດເອີຍ, ພຣະຜູ້ເປັນເຈົ້າໄດ້ບອກພວກເຈົ້າແລ້ວວ່າແມ່ນຫຍັງດີ ສິ່ງທີ່ພຣະອົງປະສົງຈາກເຈົ້າກໍຄື ໃຫ້ກະ
ທຳຄວາມຍຸດຕິທັມສະແດງຄວາມຮັກຫມັ້ນຄົງ ແລະເຊື່ອຟັງພຣະເຈົ້າຂອງເຈົ້າຢ່າງອ່ອນນ້ອມ

Cheating and Violence to Be Punished

9 ການຢຳເກງພຣະຜູ້ເປັນເຈົ້າເປັນການສລາດແທ້ ພຣະອົງຊົງຮ້ອງໃສ່ເມືອງນີ້ວ່າ, “ຈົ່ງຟັງ ໄພ່ພົນທີ່ໄດ້ປະຊຸມ
ກັນຢູ່ໃນເມືອງ
10 ໃນເຮືອນຂອງຄົນຊົ່ວມີຊັບສົມບັດ ຊຶ່ງພວກເຂົາໄດ້ມາດ້ວຍການທຸຈຣິດ ພວກເຂົາໃຊ້ຕາຊົງປອມຊຶ່ງເຮົາກຽດ
ຊັງ
11 ເຮົາຈະຍົກໂທດມະນຸດຜູ້ໃຊ້ຕາຊັ່ງແລະຕາຊົງໂກງໄດ້ຫລື
12 ຄົນຮັ່ງມີໃນເມືອງຫາຜົນປໂຍດນຳຄົນທຸກຍາກ ປະຊາຊົນກໍຂີ້ຕົວະ
13 ມາບັດນີ້ ເຮົາໄດ້ລົງມືມ້າງເພແລະທຳລາຍແລ້ວ ກໍຍ້ອນຄວາມບາບຂອງພວກເຈົ້າ
14 ເຈົ້າຈະກິນແຕ່ບໍ່ຮູ້ອີ່ມ ເຈົ້າຈະຫິວເລື້ອຍໆໄປ ເມື່ອເຈົ້າສະສົມສິ່ງຂອງໄວ້ ເຮົາກໍຈະທຳລາຍສິ່ງເຫລົ່ານັ້ນດ້ວຍ
ສົງຄາມເສັຽ
15 ເຈົ້າຈະຫວ່ານເມັດເຂົ້າແຕ່ຈະບໍ່ໄດ້ເກັບກ່ຽວ ເຈົ້າຈະອື້ນ້ຳມັນຈາກຫມາກກອກເທດ ແຕ່ເຈົ້າຈະບໍ່ໄດ້ໃຊ້ນ້ຳ
ມັນນັ້ນ ເຈົ້າຈະເຮັດເຫລົ້າອະງຸ່ນ ແຕ່ເຈົ້າຈະບໍ່ໄດ້ດື່ມເຫລົ້ານັ້ນ

16 ເຈົ້າໄດ້ທຳຊົ່ວຕາມກະສັດອົມຣີ ແລະບຸດຊາຍຂອງພຣະອົງຄື ກະສັດອາຮາບ ໂດຍໄດ້ດຳເນີນຕາມກົນອຸບາຍ
ຂອງພວກເຂົາ ດັ່ງນີ້ແຫລະ, ເຮົາຈະນຳພວກເຈົ້າໄປສູ່ຄວາມຈິບຫາຍ ແລະທຳໃຫ້ປະຊາຊົນທຸກຄົນຂອງພວກ
ເຈົ້າຖືກຢຽບຫຍາມ ປະຊາຊົນທຸກບ່ອນຈະດູຫມິ່ນປມາດພວກເຈົ້າ

## 7 ສິນທັມຂອງອິສຣາເອນເສື່ອມລົງ

The Total Corruption of the People

1 ສິ້ນຫວັງສາແລ້ວ ຂ້າພະເຈົ້າເປັນເຫມືອນຄົນຫິວຜູ້ນຶ່ງຊຶ່ງຫາຜົນລະໄມ້ແລະຜົນອະງຸ່ນໃນຕົ້ນບໍ່ໄດ້ ຫມາກອະ
ງຸ່ນແລະຫມາກເດື່ອກໍຖືກເກັບໄປຫມົດແລ້ວ
2 ຢູ່ໃນປະເທດນີ້ບໍ່ມີຄົນສຸຈຣິດ ແລະຄົນສັດຊື່ຕໍ່ພຣະເຈົ້າແມ່ນແຕ່ຄົນດຽວ ພວກເຂົາຕາຍຫມົດແລ້ວ ຕ່າງກໍຫາ
ໂອກາດຂ້າຟັນລັນແທງຊຶ່ງກັນແລະກັນ ຕ່າງກໍຫ້າງແຮ້ວດັກຈັບພີ່ນ້ອງຂອງຕົນເອງ
3 ພວກເຂົາຊຳນິຊຳນານໃນການກະທຳຊົ່ວ ພວກເຈົ້າຫນ້າທີ່ແລະຜູ້ພິພາກສາຕ້ອງການສິນບົນ ຄົນທີ່ມີອິດທິພົນ
ກໍເອີ່ຍເຖິງແຕ່ສິ່ງທີ່ເຂົາຕ້ອງການ ສະນັ້ນ ພວກເຂົາຈຶ່ງວາງອຸບາຍໃສ່ກັນແລະກັນ
4 ແມ່ນແຕ່ຄົນດີແລະຄົນສຸຈຣິດກວ່າຫມູ່ໃນພວກເຂົາກໍເປັນເຫມືອນຫນາມ ເມື່ອເວລານັ້ນມາເຖິງພຣະເຈົ້າກໍຈະ
ລົງໂທດໄພ່ພົນຂອງພຣະອົງ ຕາມທີ່ຊົງເຕືອນເຂົາໄວ້ ບັດນີ້ ພວກເຂົາກຳລັງວຸ້ນວາຍ
5 ຢ່າເຊື່ອໃຈທາງຢ່າວາງໃຈຄົນ ຈົ່ງລະມັດລະວັງໃນສິ່ງທີ່ເຈົ້າເວົ້າແມ່ນແຕ່ກັບພັຣຍາກໍດີ
6 ໃນເວລານັ້ນ ລູກຊາຍຈະປະພຶດຮ້າຍຕໍ່ບິດາ ແລະລູກສາວຈະຕໍ່ສູ້ມານດາ ລູກສະໃໄພ້ຈະຕໍ່ສູ້ແມ່ຍ່າ ແມ່ນແຕ່
ສະມາຊິກໃນຄອບຄົວດຽວກໍກາຍເປັນສັດຕຣູກັນ
7 ແຕ່ຂ້າພະເຈົ້າຈະເຝົ້າແຍງເບິ່ງພຣະຜູ້ເປັນເຈົ້າ ຂ້າພະເຈົ້າຈະເຝົ້າຄອຍພຣະເຈົ້າດ້ວຍຄວາມຫວັງ ເພາະພຣະ
ອົງຈະຊົດຊ່ອຍຂ້າພະເຈົ້າໃຫ້ພົ້ນພັຍພຣະເຈົ້າຈະຊົງຟັງຂ້າພະເຈົ້າ

Penitence and Trust in God

8 ສັດຕຣູຂອງຂ້າເອີຍ, ຢ່າເຍາະເຍີ້ຍຂ້າເລີຍ ຂ້າລົ້ມລົງແຕ່ຂ້າຈະລຸກຂຶ້ນໃຫມ່ ເວລານີ້ຂ້າຢູ່ໃນຄວາມມືດ ແຕ່ພ
ຣະຜູ້ເປັນເຈົ້າເປັນແສງສວ່າງຂອງຂ້າ ຂ້າໄດ້ເຄີຍທຳບາບຕໍ່ສູ້ພຣະເຈົ້າ
9 ເຫດສັນນັ້ນ ຂ້າພະເຈົ້າຈະຕ້ອງອົດທົນຕໍ່ພຣະພິໂຣດຂອງພຣະອົງຢູ່ຊົ່ວລະຍະນຶ່ງ ໃນທີ່ສຸດ ພຣະອົງຈະປົກ
ປ້ອງຂ້າພະເຈົ້າ ແລະທຳໃຫ້ຜູ້ທີ່ກ່າວຜິດຕໍ່ຂ້າພະເຈົ້ານັ້ນຜ່າຍແພ້ຄະດີໄປ
10 ແລ້ວສັດຕຣູຂອງຂ້າພະເຈົ້າຈະເຫັນສິ່ງນັ້ນ ແລະກໍຈະໄດ້ຮັບຄວາມອັບອາຍຂາຍຫນ້າສັດຕຣູຜູ້ຊຶ່ງກ່າວທັບຖົມ
ຂ້າພະເຈົ້າໄດ້ເວົ້າວ່າ, “ພຣະຜູ້ເປັນເຈົ້າຂອງເຈົ້າຢູ່ໃສ?” ຂ້າພະເຈົ້າກໍຈະເຫັນເຂົາຜ່າຍແພ້ໄປ ແລະຖືກຢຽບຢ
່ຳລົງເຫມືອນຂີ້ຕົມໃນ  ຖນົນ

A Prophecy of Restoration

11 ເວລາທີ່ຈະສ້າງກຳແພງເມືອງຂຶ້ນໃຫມ່ມາຮອດແລ້ວ ໃນເວລານັ້ນ ເຂດແດນຂອງພວກເຈົ້າຈະຂຍາຍອອກໄປ
12 ປະຊາຊົນຂອງພວກເຈົ້າ ກໍຈະກັບຄືນຈາກທົ່ວທຸກບ່ອນຄືຈາກອັສຊີເຣັຽທາງທິດຕາເວັນອອກ ຈາກເອຢິບທາງ
ທິດໃຕ້ ຈາກທະເລແລະພູທີ່ແສນໄກ
13 ແຕ່ທົ່ວໂລກຈະກາຍເປັນຖິ່ນກັນດານກໍຍ້ອນວ່າ ຄົນທີ່ອາສັຍຢູ່ໃນໂລກນີ້ໄດ້ກະທຳຊົ່ວ
14 ໂອ ພຣະຜູ້ເປັນເຈົ້າ ຂໍຊົງເປັນຜູ້ລ້ຽງໄພ່ພົນຊຶ່ງພຣະອົງໄດ້ເລືອກໄວ້ແລ້ວທ້ອນ ດຽວນີ້ ພວກເຂົາກຳລັງຢູ່ໂດດ
ດ່ຽວໃນປ່າ ຢູ່ເຂດອ້ອມແອ້ມເຂົາມີດິນດີສຳລັບການເພາະປູກຄື ດິນໃນທົ່ງຫຍ້າທີ່ບາຊານ ແລະກິເລອາດ ຂໍ
ໃຫ້ພວກເຂົາໄປທຳມາຫາກິນໃນທີ່ນັ້ນທ້ອນ ດັ່ງທີ່ພວກເຂົາໄດ້ທຳມາຫາກິນມາແລ້ວແຕ່ບູຮານນະການທ້ອນ
15 ໂອ ພຣະຜູ້ເປັນເຈົ້າ ຂໍທຳການອັສຈັນສຳລັບພວກຂ້າພຣະອົງເຫມືອນຄາວທີ່ພຣະອົງຊົງເຮັດຍາມອອກຈາກ
ປະເທດເອຢິບທ້ອນ

16 ຊົນຊາດທັງຫລາຍຈະເຫັນການກະທຳນັ້ນ ແລະຈະໄດ້ຮັບຄວາມອັບອາຍຂາຍໜ້າ ແມ່ນວ່າພວກເຂົາຈະມີ
ອຳນາດຫລາຍປານໃດກໍຕາມ ພວກເຂົາກໍຈະເວົ້າຫຍັງບໍ່ໄດ້ ແລະຟັງຫຍັງບໍ່ອອກ
17 ພວກເຂົາຈະລິເລືອໄປຕາມດິນເໝືອນງູ ພວກເຂົາຢ້ານກົວຈົນຕົວສັ່ນ ແລະອອກມາຈາກບ່ອນລັບລີ້ເໝືອນ
ສັດເລືອຄານ ພວກເຂົາຈະກັບມາຫາພຣະຜູ້ເປັນເຈົ້າຂອງພວກເຂົາດ້ວຍຄວາມຢ້ານກົວ

God’s Compassion and Steadfast Love

18 ໂອ ພຣະຜູ້ເປັນເຈົ້າເອີຍ, ບໍ່ມີພຣະເຈົ້າອົງໃດເໝືອນພຣະອົງເລີຍ ພຣະອົງຊົງຍົກໂທດຄວາມບາບຂອງໄພ່
ພົນຜູ້ທີ່ຍັງເຫລືອຢູ່ ພຣະອົງຈະບໍ່ພິໂຣດອີກຕໍ່ໄປ ແຕ່ຍິນດີຈະສະແດງຄວາມຮັກໝັ້ນຄົງຕໍ່ພວກຂ້າພຣະອົງ
19 ພຣະອົງຍັງຈະເມດຕາຕໍ່ພວກຂ້າພຣະອົງອີກເທື່ອນຶ່ງຄື ພຣະອົງຈະຢຽບຄວາມຜິດຂອງພວກຂ້າພຣະອົງໄວ້ໃຕ້
ພຣະບາດ ແລະໂຍນຄວາມບາບຂອງພວກຂ້າພຣະອົງລົງໃນທະເລເລິກ
20 ພຣະອົງຈະສະແດງຄວາມຊື່ສັດສຸຈຣິດ ແລະຄວາມຮັກໝັ້ນຄົງຕໍ່ພວກອິສຣາເອນໄພ່ພົນຂອງພຣະອົງ ຕໍ່ເຊື້ອ
ສາຍຂອງອັບຣາຮາມດັ່ງທີ່ພຣະອົງໄດ້ຊົງສັນຍາຢ່າງຄັກແນ່ໄວ້ຕໍ່ປູ່ຍ່າຕາຍາຍຂອງພວກຂ້າພຣະອົງແຕ່ບູຮານ
ນະການ